ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 81 /ສພຂ.ຊຍ

ໄຊຍະບູລີ, ວັນທີ 26 ກໍລະກົດ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ - ສັງຄົມຂອງແຂວງ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 60 ກອງປະຊຸມສະໄໝສາມັນ ປະຈຳ 6 ເດືອນຕົ້ນປີ ຂອງສະພາປະຊາຊົນແຂວງ;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II.

ຜ່ານການຮັບຟັງການລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024. ການປະກອບຄຳເຫັນຂອງ ຄະນະປະຈຳສະພາປະຊາຊົນແຂວງ ແລະ ການປະກອບຄຳເຫັນຂອງສະມາຊິກສະພາປະຊາຊົນແຂວງ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II.

ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ໄລຍະ 6 ເດືອນຕົ້ນປີ 2024**

ກອງປະຊຸມສະພາປະຊາຊົນແຂວງ ເຫັນດີຮັບຮອງເອົາບົດລາຍງານກ່ຽວກັບ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ໄລຍະ 6 ເດືອນຕົ້ນປີ 2024 ທີ່ດຳເນີນໄປໃນສະພາບເສດຖະກິດຂອງພາກພື້ນ ແລະ ສາກົນ ທີ່ສືບຕໍ່ຜັນແປຢ່າງສັບສົນ ບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ - ການເງິນພາຍໃນປະເທດ ເປັນອຸປະສັກ ແລະ ສິ່ງທ້າທາຍຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ແຕ່ອົງການປົກຄອງແຂວງກໍ່ມີຄວາມພະຍາຍາມສູ້ຊົນ ຈັດຕັ້ງປະຕິບັດຫຼາຍຄາດໝາຍມີຄວາມຄືບໜ້າ ດັ່ງນີ້:

1. ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ເປັນຕົ້ນໄດ້ສຸມໃສ່ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ - ການເງິນ ແລະ ປະກົດການຂາຍໍ້ທໍ້ໄດ້ຫຼາຍກໍລະນີໃນຂອບເຂດທົ່ວແຂວງ;

2. ເສດຖະກິດຂະຫຍາຍຕົວຢູ່ໃນລະດັບ 3,5% (ແຜນການໝົດປີໃຫ້ບັນລຸ 5,5%), ລວມຍອດຜະລິດຕະພັນພາຍໃນບັນລຸໄດ້ 12,670 ຕື້ກີບ ເທົ່າກັບ 80,39% ຂອງແຜນການປີ ສະເລ່ຍໃສ່ຫົວຄົນໄດ້ 29,67 ລ້ານກີບ ໃນນັ້ນ: ຂະແໜງກະສິກຳ ຂະຫຍາຍຕົວ 2,7% ກວມເອົາ 27%; ຂະແໜງອຸດສະຫະກຳ ຂະຫຍາຍຕົວ 6,9% ກວມເອົາ 35% ແລະ ຂະແໜງບໍລິການ ຂະຫຍາຍຕົວ 4,1% ກວມເອົາ 38% ຂອງລວມຍອດຜະລິດຕະພັນພາຍໃນ;

3. ການປະຕິບັດຄາດໝາຍດ້ານງົບປະມານ

- ດ້ານລາຍຮັບ: ສາມາດເກັບລາຍຮັບ ບັນລຸໄດ້ 1.143,09 ຕື້ກີບ, ເທົ່າກັບ 54,63 % ຂອງແຜນປີ; ໃນນີ້: ລາຍຮັບພູດສູນກາງປະຕິບັດໄດ້ທັງໝົດ 636,39 ຕື້ກີບ, ເທົ່າກັບ 46,22 % ຂອງແຜນການປີ ແລະ ລາຍຮັບພາຍໃນແຂວງປະຕິບັດໄດ້ 506,70 ຕື້ກີບ ເທົ່າກັບ 70,84 % ຂອງແຜນການປີ;
- ດ້ານລາຍຈ່າຍ: ປະຕິບັດລາຍຈ່າຍຕົວຈິງໄດ້ 329,82 ຕື້ກີບ, ເທົ່າກັບ 63,75% ຂອງແຜນການປີ.

4. ການລົງທຶນເພື່ອການພັດທະນາ: ປະຕິບັດໄດ້ 2.296,34 ຕື້ກີບ ເທົ່າກັບ 53,53% ຂອງແຜນການປີ;

5. ການສົ່ງອອກ ແລະ ນຳເຂົ້າສິນຄ້າ: ມູນຄ່າການສົ່ງອອກບັນລຸໄດ້ 57,47 ລ້ານໂດລາສະຫະລັດ ເທົ່າກັບ 60,32% ຂອງແຜນການປີ; ການນຳເຂົ້າສິນຄ້າ ປະຕິບັດໄດ້ 22,6 ລ້ານໂດລາສະຫະລັດ ເທົ່າກັບ 39,79% ຂອງແຜນການປີ;

6. ຂົງເຂດວັດທະນະທຳສັງຄົມ ຫຼາຍຄາດໝາຍມີຄວາມຄືບໜ້າດີ ແລະ ສາມາດບັນລຸ, ອັນທີ່ພົ້ນເດັ່ນແມ່ນໄດ້ເປີດແຫຼ່ງທ່ອງທ່ຽວລາວ 2024 ແລະ ຈັດກິດຈະກຳປີທ່ອງທ່ຽວລາວ ຢ່າງເປັນຂະບວນຟົດຟື້ນ ສາມາດດຶງດູດນັກທ່ອງທ່ຽວໄດ້ 76,376 ຄົນ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການພັດທະນາເສດຖະກິດ - ສັງຄົມຂອງແຂວງ 6 ເດືອນທ້າຍປີ 2024**

ກອງປະຊຸມເຫັນດີ ຮັບຮອງແຜນວຽກຈຸດສຸມຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ບັນລຸຕາມແຜນການໃນທ້າຍປີ 2024 ກອງປະຊຸມສະເໜີໃຫ້ເອົາໃຈໃສ່ເພີ່ມເຕີມ ດັ່ງນີ້:

ກ. ຄາດໝາຍເສດຖະກິດມະຫາພາກ:

**1. ຄາດໝາຍການເຕີບໂຕເສດຖະກິດ:**

- ຄາດຄະເນການເຕີບໂຕເສດຖະກິດຂອງແຂວງຮອດທ້າຍປີ 2024 ໃຫ້ຂະຫຍາຍຕົວ ຢູ່ໃນລະດັບບໍ່ໃຫ້ຫລຸດ 5.5% ແລະ ລວມຍອດຜະລິດຕະພັນພາຍໃນ 15,762 ຕື້ກີບ, ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 36,93 ລ້ານກີບ ໃນນີ້:
  + ຂະແໜງກະສິກຳ ຂະຫຍາຍຕົວໃຫ້ໄດ້ 3% ກວມ 26%;
  + ຂະແໜງອຸດສາຫະກຳຂະຫຍາຍຕົວໃຫ້ໄດ້ 8,7% ກວມ 38%;
  + ການບໍລິການຂະຫຍາຍຕົວໃຫ້ໄດ້ 3,7% ກວມ 36% ຂອງລວມຍອດຜະລິດຕະພັນ.

**2. ຄາດໝາຍງົບປະມານ:**

- ສູ້ຊົນເກັບລາຍຮັບໃຫ້ໄດ້ 1.131,76 ຕື້ກີບຂຶ້ນໄປ ໃນນີ້: ລາຍຮັບ ພູດສູນກາງ 671,75 ຕື້ກວ່າກີບ, ລາຍຮັບພູດທ້ອງຖິ່ນໃຫ້ໄດ້ 460,01 ຕື້ກີບ;
- ຄຸ້ມຄອງລາຍຈ່າຍບໍ່ໃຫ້ເກີນ 373,99 ຕື້ກີບ;
- ສູ້ຊົນໃຫ້ເປັນແຂວງເກີນດຸນງົບປະມານ 95,64 ຕື້ກີບ (ດຸນໃຫ້ສູນກາງ).

3. ຄາດໝາຍທຶນເພື່ອການພັດທະນາ:

- ສືບຕໍ່ລະດົມທຶນທົ່ວສັງຄົມ ເພື່ອພັດທະນາໝົດປີໃຫ້ໄດ້ 4.256 ຕື້ກີບຂຶ້ນໄປ ໃນນີ້:
  - + ການລົງທຶນຂອງລັດ ເທົ່າກັບ 128 ຕື້ກີບ;
  - + ການລົງທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ 426 ຕື້ກີບ;
  - + ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ເທົ່າກັບ 2.340 ຕື້ກີບ;
  - + ການປ່ອຍສິນເຊື່ອທະນາຄານ ເທົ່າກັບ 1.362 ຕື້ກີບ.

ຂ. **ຄາດໝາຍດ້ານເສດຖະກິດບັນດາຂະແໜງການ:** ສຸມໃສ່ການຈັດຕັ້ງປະຕິບັດບັນດາຄາດໝາຍຂອງມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ສະບັບເລກທີ 02/ສພຂ.ຊຍ ໃຫ້ບັນລຸຕາມແຜນການ.

ຄ. **ຄາດໝາຍດ້ານວັດທະນະທຳ - ສັງຄົມ:** ສຸມໃສ່ການຈັດຕັ້ງປະຕິບັດບັນດາຄາດໝາຍຂອງ ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ ສະບັບເລກທີ 02/ສພຂ.ຊຍ ໃຫ້ບັນລຸຕາມແຜນການ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ 6 ເດືອນທ້າຍປີ 2024**

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາ 15 ມາດຕະການຕາມການສະເໜີ ຂອງອົງການປົກຄອງແຂວງ, ເພື່ອຮັບປະກັນການຈັດຕັ້ງປະຕິບັດບັນດາຄາດໝາຍໃຫ້ບັນລຸຕາມແຜນການໃນທ້າຍປີ 2024, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ສືບຕໍ່ຈັດຕັ້ງຜັນຂະຫຍາຍ ມະຕິ 04/ກມສພ, ຄຳສັ່ງ ເລກທີ 01/ຄພຂ.ຊຍ ຂອງຄະນະປະຈຳພັກແຂວງ ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່ ຕິດພັນກັບການແກ້ໄຂບັນຫາຄັ່ງຄ້າງ ທາງດ້ານເສດຖະກິດ - ການເງິນ ໃຫ້ເປັນຮູບປະທຳ, ຖືເປັນຄວາມຮັບຜິດຊອບຂອງຄະນະພັກ - ຄະນະນຳແຕ່ລະຂັ້ນ ແລະ ເປັນຄວາມຮັບຜິດຊອບຂອງທົ່ວປວງຊົນ;
2. ສືບຕໍ່ຊຸກຍູ້ສົ່ງເສີມການຜະລິດ ເພື່ອທົດແທນການນຳເຂົ້າຕິດພັນກັບການປຸງແຕ່ງ ເພື່ອສົ່ງອອກຫຼາຍຂຶ້ນ ໂດຍສຸມໃສ່ຂະແໜງການທີ່ເປັນທ່າແຮງຂອງແຂວງ, ຄຽງຄູ່ໄປກັບການສະໜັບສະໜູນທາງດ້ານງົບປະມານ ເຕັກນິກການຜະລິດທີ່ທັນສະໄໝ, ການເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າ, ສິນເຊື່ອກະຕຸ້ນເສດຖະກິດ, ສິນເຊື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນໃຫ້ວ່ອງໄວ ແລະ ເປັນຮູບປະທຳຫຼາຍຂຶ້ນ;
3. ຍູ້ແຮງໂຄງການລົງທຶນຂອງລັດທີ່ຍັງຊັກຊ້າ ແລະ ໂຄງການທີ່ສະເໜີໃໝ່ ໃນປີ 2024 ໃຫ້ຈັດຕັ້ງປະຕິບັດໄດ້ຕາມແຜນການທີ່ກຳນົດໄວ້ ເຊັ່ນ: ເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງຍຸດທະສາດທີ່ອອກສູ່ຊາຍແດນ, ຕ້ານເຈື່ອນ, ໄຟຟ້າ, ຊົນລະປະທານ ແລະ ອື່ນໆ;
4. ຄຸ້ມຄອງ ແລະ ກວດກາຢ່າງເຂັ້ມງວດໃນການນຳເຂົ້າ ແລະ ຈຳໜ່າຍສິນຄ້າອຸປະໂພກ, ບໍລິໂພກຢູ່ດ່ານ ແລະ ຕະຫຼາດພາຍໃນແຂວງ, ຮັບປະກັນການຕິດສະຫຼາກພາສາລາວ ແລະ ສະແດງອາກອນ ຫຼື ຕິດສິນຄ້າເປັນເງິນກີບ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ຄຸ້ມຄອງເງິນຕາໃຫ້ເຂົ້າສູ່ລະບົບ ພ້ອມທັງມີມາດຕະການຢ່າງເດັດຂາດຕໍ່ຜູ້ລະເມີດ;
5. ປະເມີນຄືນຄວາມຕ້ອງການບໍລິໂພກພາຍໃນ ແລະ ການສະໜອງຈາກການຜະລິດພາຍໃນແລ້ວຍັງລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II;
6. ສືບຕໍ່ຈັດຕັ້ງຜັນຂະຫຍາຍຍຸດທະສາດ ການພັດທະນາແຮ່ທາດຮອດປີ 2030 ແລະ ວິໄສທັດຮອດປີ 2040 ໃຫ້ເປັນແຜນງານ, ໂຄງການລະອຽດ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງແຂວງ;

7. ສືບຕໍ່ສ້າງແຜນຈັດສັນທີ່ດິນຂັ້ນເມືອງ, ໄປພ້ອມກັບການຈັດສັນທີ່ດິນ 8 ປະເພດ ການອອກໃບຕາດິນ ໃຫ້ສຳເລັດຕາມແຜນການ, ຮີບຮ້ອນອອກໃບຕາດິນໃຫ້ແກ່ປະຊາຊົນ ທີ່ນອນຢູ່ໃນ 3 ປະເພດປ່າໃຫ້ສຳເລັດໂດຍໄວ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024;

8. ເພີ່ມທະວີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ຕາມຄຳສັ່ງ ເລກທີ 11/ນຍ ກໍ່ຄືຄຳສັ່ງເລກທີ 110/ຈຂ ລົງວັນທີ 6 ກັນຍາ 2023 ຢ່າງເຂັ້ມງວດ;

9. ຕິດຕາມ ແລະ ສ້າງແຜນຮັບມືກັບສະພາບໄພທຳມະຊາດ ທີ່ອາດເກີດຂຶ້ນ, ການແຜ່ລະບາດຂອງພະຍາດຕາມລະດູການ ເພື່ອໃຫ້ສາມາດແກ້ໄຂໄດ້ທັນເວລາ;

10. ປະເມີນຄືນຜົນກະທົບດ້ານສິ່ງແວດລ້ອມ ຈາກໂຮງງານອຸດສາຫະກຳປຸງແຕ່ງ ເປັນຕົ້ນກິ່ນເໝັນ, ສຽງ, ຝຸ່ນ ພ້ອມທັງມີມາດຕະການແກ້ໄຂຢ່າງເດັ່ງຂາດ;

11. ສືບຕໍ່ຈັດຕັ້ງປະຕິບັດ ມະຕິຕົກລົງຂອງລັດຖະບານ ເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບ ແກ້ໄຂບັນຫາການຂາດແຄນຄູສອນ ແລະ ບັນຫາການປະລະການຮຽນ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນຍິ່ງຂຶ້ນ;

12. ເອົາໃຈໃສ່ໃນການຊຸກຍູ້, ສົ່ງເສີມການທ່ອງທ່ຽວ, ການພັດທະນາແຫຼ່ງທ່ອງທ່ຽວ, ສິ່ງອຳນວຍຄວາມສະດວກ ໃຫ້ແກ່ນັກທ່ອງທ່ຽວ;

13. ຊຸກຍູ້ສົ່ງເສີມການຈັດຫາງານ, ພັດທະນາສີມືແຮງງານ ແລະ ແກ້ໄຂບັນຫາແຮງງານ ໄປອອກແຮງງານຢູ່ຕ່າງປະເທດ;

14. ສືບຕໍ່ປັບປຸງ ແລະ ສ້າງນິຕິກຳໃຕ້ກົດໝາຍໃຫ້ສອດຄ່ອງ, ຮັດກຸມເພື່ອຄຸ້ມຄອງລັດ - ຄຸ້ມຄອງສັງຄົມໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ;

15. ສືບຕໍ່ແກ້ໄຂປະກົດການຫຍໍ້ທໍ້ຢູ່ໃນສັງຄົມ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ເປັນພື້ນຖານສຳຄັນໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມຂອງແຂວງ.

## ມາດຕາ 4 ການຈັດຕັ້ງປະຕິບັດ

1. ມອບໃຫ້ ອົງການປົກຄອງແຂວງຊີ້ນຳບັນດາພະແນກການ, ອົງການລັດຂອງແຂວງ ແລະ ອົງການປົກຄອງເມືອງຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ ຊີ້ນຳບັນດາຄະນະກຳມະການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ສືບຕໍ່ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

## ມາດຕາ 5 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ